Lao

ເຖິງ: ຄນະພະນັກງານກະຊວງສຶກສາທົ່ວຂົງເຂດເມືອງແຟຣສໂນທຸກໆ ທ່ານ

ຈາກ: ທ່ານ. Larry L. Powell, ຜູ້ອຳນວຍການກະຊວງສຶກສາ

ວັນທີ: ວັນທີ 1, ເດືອນພຶສພາ (5), 2009

ດັ່ງທີ່ທ່ານອາຈຮັບຮູ້ແລ້ວວ່າ, ກ່ອນໜ້ານີ້ເອີ້ນກັນວ່າເຊື້ອໄວຣັສໄຂ້ຫວັດໝູ (swine influenza) ແລະປັຈຸບັນນີ້ເອີ້ນວ່າໄຂ້ຫວັດ (H1N1 influenza) ຊຶ່ງເປັນຕົ້ນເຫດໃຫ້ເກີດຄວາມກັງວົນໃນຣັຖຄາລີຟໍຣ໌ເນັຍ ແລະໃນທົ່ວປະເທດ. ຂ້າພະເຈົ້າຕ້ອງການຢາກໃຫ້ທ່ານຍຶດໝັ້ນວ່າກະຊວງສຶກສາທົ່ວຂົງເຂດເມືອງແຟຣສໂນຈຳເປັນຕ້ອງໄດ້ປະຕິບັດຕາມຂັ້ນຕອນເພື່ອຮັກສາບ່ອນເຮັດວຽກ ແລະສະພາບແວດລ້ອມຂອງໂຮງຮຽນໃຫ້ປອດພັຍ ແລະສຸຂພາບສົມບູນດີ.

ຣະຍະທີ່ພວກເຮົາບໍ່ໄດ້ປະສົງທີ່ຈະສ້າງໃຫ້ເກີດຄວາມຢ້ານກົວ, ຂ້າພະເຈົ້າຂໍຊັກນຳໃຫ້ທ່ານໄດ້ກະກຽມ, ເຊື່ອໝັ້ນ, ແລະຈຸດສຳຄັນທີ່ສຸດກໍ່ຄືການປະຕິບັດການຮັກສາສຸຂພາບທີ່ດີເພື່ອປ້ອງກັນຕົວຂອງທ່ານເອງ ແລະຄອບຄົວຂອງທ່ານ.

ຂັ້ນຕອນດັ່ງຕໍ່ໄປນີ້ ແມ່ນເປັນຂໍ້ແນະນຳທີ່ດີກ່ຽວກັບຫລັກເກນໃນການປ້ອງກັນ:

1. ໃຫ້ໃຊ້ເຈັ້ຍເຊັດອັດປາກເວລາໄອ ຫລືໃຫ້ໄອໃສ່ແຂນເສື້ອຂອງຕົນ. ຖິ້ມເຈັ້ຍເຊັດລົງໃສ່ຖັງຂີ້ເຫຍື້ອຫລັງຈາກທີ່ໃຊ້ແລ້ວ.
2. ລ້າງມືເລື້ອຍໆ, ໂດຍສະເພາະຫລັງຈາກໄອ ຫລືຈາມ ແລະກ່ອນກິນອາຫານ.
3. ໃຊ້ນ້ຳຢາທຳຄວາມສະອາດມືທີ່ບໍ່ມີນ້ຳ ໃນຣະຍະການທຳງານຂອງທ່ານຕລອດວັນ.
4. ຫລີກລ້ຽງການສຳພັດຕາ, ດັງ ຫລືປາກຂອງທ່ານ.
5. ຫາກທ່ານປ່ວຍ, ຕ້ອງຢູ່ບ້ານ. ໃຊ້ເວລາປ່ວຍທີ່ທ່ານມີຢູ່ ແລະບໍ່ຕ້ອງກັບໄປເຮັດວຽກຈົນກວ່າອາການປ່ວຍຂອງທ່ານຈະຫາຍຂາດເປັນປົກກະຕິ.

ອາການໄຂ້ຫວັດໝູ່ (H1N1 influenza) ຄ້າຍຄືກັນກັບອາການໄຂ້ຫວັດຕາມຣະດູການ ແລະປະກອບດ້ວຍ:

1. ມີໄຂ້ (ປົກຕິແລ້ວເກີນກວ່າ 100° F)
2. ປວດຫົວ
3. ອ່ອນເພັຍຫລາຍທີ່ສຸດ
4. ໄອແຫ້ງໆ
5. ເຈັບຄໍ
6. ມີຂີ້ມູກໄຫລ ຫລືຕັນດັງ
7. ເຈັບກ້າມເນື້ອ
8. ອາການຂອງທ້ອງ, ເຊັ່ນ ເຄື່ອນໄສ້, ຮາກ ແລະ ອາຈມີອາການທ້ອງຮ້ວງ, ແຕ່ມັກຈະເກີດຂື້ນກັບເດັກນ້ອຍຫລາຍກວ່າຜູ້ໃຫຍ່.

ຫາກທ່ານ, ຫລືສະມາຊິກຄອບຄົວຂອງທ່ານມີອາການດັ່ງນີ້ລວມທັງອາການໄຂ້ສູງ, ໃຫ້ຕິດຕໍ່ຫາທ່ານໝໍຂອງທ່ານ. ຖ້າຫາກທ່ານໝໍຂອງທ່ານບົ່ງມະຕິພະຍາດວ່າອາການປ່ວຍຂອງທ່ານ ຫລືສະມາຊິກຄອບຄົວຂອງທ່ານວ່າເປັນໄຂ້ຫວັດໝູ, ໃຫ້ຕິດຕໍ່ຫາ Laurie Gabriel, ຊຶ່ງເປັນຜູ້ບໍຣິຫານ, ເບີໂທຣະສັບ: 265-3008 ຕໍ່ 13555 ຫລື Rhonda Lodridge, ຜູ້ຊຳນານດ້ານສວັດດີການ, ເບີໂທຣະສັບ: 265 – 3008 ຕໍ່ 13136 ນະໂຍບາຍຮັບໃຊ້ພະນັກງານຂອງພວກເຮົາໄວເທົ່າທີ່ຈະໄວໄດ້ເພື່ອປ້ອງກັນການຕິດເຊື້ອພາຍໃນບ່ອນເຮັດວຽກ. ກະຊວງສຶກສາທົ່ວຂົງເຂດເມືອງແຟຣສໂນຈະສືບຕໍ່ຮ່ວມມືກັບກະຊວງສຶກສາແຫ່ງຣັຖຄາລີຟໍຣ໌ເນັຍ, ກະຊວງສາທາຣະນະສຸຂ ແຫ່ງຣັຖຄາລີຟໍຣ໌ເນັຍ, ແລະກະຊວງສາທາຣະນະສຸຂເມືອງແຟຣສໂນເພື່ອສົ່ງຂ່າວສານໃໝ່ລ່າສຸດໃຫ້ແກ່ທ່ານ. ນອກນັ້ນ, ຍັງມີ ໂຮມເພຊ ຂອງກະຊວງສຶກສາທົ່ວຂົງເຂດເມືອງແຟຣສໂນໄດ້ມີການເຊື່ອມໂຍງກັບອົງກອນຕ່າງໆ ກ່ຽວກັບໄຂ້ຫວັດໝູ ຢ່າງເປັນຫມື່ນເປັນແສນ. ເພື່ອເຂົ້າຫາໃຫ້ກົດເຂົ້າ: www.fcoe.org\swineflu.

ຄວາມສຸຂສະບາຍຂອງຄອບຄົວກະຊວງສຶກສາທົ່ວຂົງເຂດເມືອງແຟຣສໂນຂອງພວກເຮົາແມ່ນມີຄວາມສຳຄັນສຳລັບພວກເຮົາ. ຮ່ວມມືກັບປະສານງານ, ພວກເຮົາສາມາດຈັດຫາສະພາບແວດລ້ອມທີ່ມີພະລາອະນາມັຍແກ່ພະນັກງານ ແລະນັກຮຽນຂອງພວກເຮົາຕໍ່ໄປ.